ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 054 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 08 JUL 2020

# ໜັງສືແຈ້ງເຊີນ

**ເຖິງ**: ບັນດາທ່ານຫົວໜ້າບໍລິສັດ, ຜູ້ສະໜອງ ທີ່ເປັນຕົວແທນຈຳໜ່າຍປະເພດເຄື່ອງຈັກ ໃນນະຄອນຫຼວງວຽງຈັນ.

**ເລື່ອງ**: ເຊີນເຂົ້າຮ່ວມຍື່ນຊອງລາຄາ ເຄື່ອງຈັກນັບ-ຄັດໄຈ້-ກວດເງິນປອມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານ ຜູ້ສະໜອງເຄື່ອງຈັກ ຍື່ນຊອງປະມູນ ເຄື່ອງຈັກທີ່ສາມາດ: ນັບເງິນ-ຄັດໄຈ້ເງິນ-ກວດເງິນປອມໄດ້ຫຼາຍສະກຸນ ເພື່ອປະກອບເປັນເຄື່ອງມືຮັບໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ຄື: **ເຄື່ອງຈັກນັບ-ຄັດໄຈ້ເງິນລຸ້ນ 2 (1+1) ຊ່ອງ, 4 (3+1) ຊ່ອງ ແລະ 8 ຊ່ອງ** ຕາມເງື່ອນໄຂດັ່ງລຸ່ມນີ້:

➢ **ເອກະສານ ຊອງທີ 1 (ບໍ່ປິດຊອງ):**

- ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງຈັກນັບເງິນ, ຕ້ອງມີວິຊາການກ່ຽວກັບເຄື່ອງຈັກດັ່ງກ່າວໂດຍສະເພາະ ແລະ ມີປະສົບການ ຢ່າງໜ້ອຍ 5 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີລ່າສຸດ, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ).
- ຄວາມສາມາດຂອງຈັກ **2 ຊ່ອງ**: ນັບເງິນ ກວດເງິນປອມ ໄຈ້ເງິນ ແລະ ລຽງໜ້າເງິນ; ກວດເງິນປອມໄດ້ຢ່າງໜ້ອຍ 6 ສະກຸນເງິນ (LAK, USD, CNY, THB, EUR, GBP); ຄວາມໄວໃນການນັບຢ່າງໜ້ອຍ 650 ໃບ/ນາທີ; ຊ່ອງຮັບເງິນທີ່ນັບແລ້ວຢ່າງໜ້ອຍ 200 ໃບ, ມີຈໍນອກເສີມ.
- ຄວາມສາມາດຂອງຈັກ **4 ຊ່ອງ**: ນັບເງິນ ກວດເງິນປອມ ລຽງໜ້າເງິນ ແລະ ຄັດແຍກເງິນເກົ່າ-ໃໝ່ ໄດ້; ສາມາດຄັດແຍກຕ່າງສະກຸນເງິນພ້ອມກັນໄດ້; ກວດເງິນປອມໄດ້ ຢ່າງໜ້ອຍ 6 ສະກຸນເງິນ (LAK, USD, CNY, THB, EUR, GBP); ຄວາມໄວໃນການນັບຢ່າງໜ້ອຍ 700 ໃບ/ນາທີ; ຊ່ອງຮັບເງິນທີ່ນັບແລ້ວຢ່າງໜ້ອຍ 2.000 ໃບ.
- ຄວາມສາມາດຂອງຈັກ **8 ຊ່ອງ**: ນັບເງິນ ກວດເງິນປອມ ລຽງໜ້າເງິນ ແລະ ຄັດແຍກເງິນເກົ່າ-ໃໝ່ ໄດ້; ສາມາດຄັດແຍກຕ່າງສະກຸນເງິນພ້ອມກັນໄດ້; ກວດເງິນປອມໄດ້ ຢ່າງໜ້ອຍ 6 ສະກຸນເງິນ (LAK, USD, CNY, THB, EUR, GBP); ຄວາມໄວໃນການນັບຢ່າງໜ້ອຍ 700 ໃບ/ນາທີ; ຊ່ອງຮັບເງິນທີ່ນັບແລ້ວຢ່າງໜ້ອຍ 2.000 ໃບ.
- ລະບຸຍີ່ຫໍ້ ແລະ ຄຸນນະພາບຂອງເຄື່ອງຈັກ ເຊັ່ນ: ຂະໜາດ, ຄຸນສົມບັດຂອງເຄື່ອງຈັກ, ການອັບເດດ Software, ການຝຶກອົບຮົມການໃຊ້ງານໃຫ້ພະນັກງານ ທຄຕລ, ລະບຸປີຜະລິດ-ປະເທດຜະລິດສິນຄ້າ, ກຳນົດເວລາສົ່ງເຄື່ອງ, ການຮັບປະກັນສິນຄ້າ, ການບຳລຸງຮັກສາ-ການບໍລິການຫຼັງການຂາຍ, ການຮັບປະກັນການເຖູມຄືນ ໃນກໍລະນີທີ່ເງິນປອມສາມາດຜ່ານໄດ້ ແລະ ເງື່ອນໄຂອື່ນໆຢ່າງລະອຽດ.
- ບໍລິສັດໃດທີ່ມີເງື່ອນໄຂໃຫ້ຈ່າຍຜ່ອນ ຫຼື ເຊົ່າ ແມ່ນໃຫ້ລະບຸມາພ້ອມ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

- ກຳນົດຍື່ນຊອງ ແມ່ນວັນທີ 16/07/2020 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

➢ **ເອກະສານ ຊອງທີ 2 (ປິດຊອງ):**

- ການສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%.
- ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸຂອງໜັງສືຄ້ຳປະກັນແມ່ນວັນທີ 15/08/2020) ຫຼື ແຊັກ ທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
- ກຳນົດຍື່ນຊອງລາຄາ ແມ່ນວັນທີ 24/07/2020 ເວລາ 14:00 ໂມງ ທີ່ຫ້ອງປະຊຸມຊັ້ນ 3 ອາຄານ C (ເປີດຊອງລາຄາຊ່ອງໜ້າກັບຄະນະກຳມະການຂອງ ທຄຕລ).

**ໝາຍເຫດ: ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະ ການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນ ມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແບ່ງຈ່າຍເປັນ 03 ງວດ ລຸ່ມນີ້:
  * ງວດທີ 1: ຊຳລະ 15% ຂອງມູນຄ່າ (ຈ່າຍລ່ວງໜ້າ) ຫຼັງຈາກເຊັນສັນຍາ ແລະ ຈົດທະບຽນສັນຍາ ແລ້ວ.
  * ງວດທີ 2: ຊຳລະ 75% ຂອງມູນຄ່າ ພາຍຫຼັງໄດ້ຮັບເຄື່ອງ ແລະ ຕິດຕັ້ງສຳເລັດ.
  * ງວດທີ 3: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນສິນຄ້າ (ຢ່າງໜ້ອຍ 01 ປີ).

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນລາຄາໃນຄັ້ງນີ້ດ້ວຍ.

ຜູ້ອຳນວຍການ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນ ຫລວງ ວຽງຈັນ

ສຸພັກ ຖິ່ນໄຊພອນ

ຕິດຕໍ່ພົວພັນ:

ຂະແໜງສະໜອງວັດຖຸເຕັກນິກ:
213200 ຕໍ່ 414